ວັງສະຫງວນ
ໃນແຂວງ ຫົວພັນ

ວັງສະຫງວນ ຢູ່ຕາມສາຍນ້ຳລຳຫ້ວຍພາຍໃນ ແຂວງຫົວພັນແມ່ນໄດ້ກາຍເປັນຍຸດທະ ສາດທີ່ໄດ້ຮັບຜົນດີ ໂດຍການເຂົ້າຮ່ວມຂອງຊຸມຊົນໃນທ້ອງຖິ່ນເພື່ອຮັບປະກັນໃຫ້ປະຊາ ກອນປາຊະນິດພັນຕ່າງໆໃຫ້ມີຄວາມອຸດົມສົມບູນຫລາຍຂຶ້ນ. ວັງສະຫງວນ ຍັງເປັນ ພື້ນຖານທີ່ຕອບສະໜອງທາງດ້ານສະບຽງອາຫານໃຫ້ປະຊາຊົນໄດ້ບໍລິໂພກປາຫລາຍ ຂຶ້ນ ແລະ ມີລາຍຮັບເພີ່ມຂຶ້ນຈາກການຂາຍປາ. ວັງສະຫງວນຍັງຊ່ວຍໃນການອະນຸລັກ ດິນແຄມຕາຝັ່ງລວມທັງການທ່ອງທ່ຽວ.

ການຂະຫຍາຍ ແລະ ຜົນກະທົບ:

- ວັງສະຫງວນ ໄດ້ສ້າງຕັ້ງຂຶ້ນຢູ່ 141 ບ້ານ ຂອງ 10 ເມືອງ ໃນທົ່ວແຂວງ.
- ໄດ້ສ້າງວັງສະຫວນ ຈຳນວນ 160 ວັງ ຢູ່ຕາມ 37 ສາຍນ້ຳລຳຫ້ວຍ.
- ວັງສະຫງວນ ເປັນແຫລ່ງສະໜອງຊີ້ນປາໃຫ້ແກ່ປະຊາຊົນຫລາຍກ່ວາ 14,000 ຄົນ ຂອງ 5,600 ຄອບຄົວ ໃນຊົນນະບົດ.
- ຊຸມຊົນທີ່ຢູ່ອ້ອມຂ້າງວັງສະຫງວນ ຫາປາໄດ້ຈຳນວນ 15,000 ກິໂລ ຕໍ່ ໜຶ່ງປີ ແລະ ຫາໄດ້ຫລາຍກ່ວາ 30 ຊະນິດ.
- ບາງຄອບຄົວມີລາຍຮັບຈາກການຫາປາ ເຖິງ 1,000,000 ກີບ ຕໍ່ ໜຶ່ງປີ.

ໂອກາດ:

- ຂະຫຍາຍຈຳນວນວັງສະຫງວນ ໃຫ້ເພີ່ມຂຶ້ນຕື່ມຕາມສາຍນ້ຳລຳຫ້ວຍພາຍໃນແຂວງ.
- ຂະຫຍາຍຂອບເຂດວັງສະຫງວນອອກ ໃຫ້ກວມເອົາລະບົບນິເວດຕາມແຄມນ້ຳ ທີ່ຢູ່ ຕິດພັນກັບຫ້ວຍນ້ຳວັງສະຫງວນ.
- ອຳນວຍຄວາມສະດວກດ້ານການທ່ອງທ່ຽວດ້ວຍການສ້າງຮ້ານອາຫານ,ຂາຍອາຫານ ປາ, ພືດຜັກ ແລະ ເຄື່ອງຫັດຖະກຳທ້ອງຖິ່ນ ເພື່ອເພີ່ມລາຍຮັບໃຫ້ແກ່ຊຸມຊົນ.
- ວັງສະຫງວນ ເປັນທ່າແຮງທີ່ສຳຄັນໃນການຊ່ວຍ ກະຕຸ້ນ ເພື່ອຫລຸດຜ່ອນການນຳໃຊ້ ຢາເຄມີປາບສັດຕູພືດ ແລະ ຢາຂ້າຫຍ້າ ໃນເຂດດິນກະສິກຳເນີນສູງ.
- ຍົກລະດັບທັດສະນະວິໄສ ແລະ ຄວາມຮັບຮູ້ ກ່ຽວກັບ ວັງສະຫງວນ ໂດຍວິທີການແຈກ ຢາຍແຜ່ນພັບ, ໂປດສະເຕີ ແລະ ຕິດປ້າຍໃຫ້ຢູ່ໃກ້ກັບເຂດບໍລິເວນພື້ນທີ່ວັງສະຫງວນ.



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC